**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------000------

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1124 /**ສສກ.ຈຕ**

ນະຄອນຫຼວງວຽງຈັນ, ວັນທີ 20 APR 2012

# ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ ລົງວັນທີ 07 ກັນຍາ 2011;
- ອີ ງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ**

**ຈຶ່ງຕົກລົງ:**

**ໝວດທີ 1**

**ບົດບັນຍັດທົ່ວໄປ**

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃນດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍການສຶກສາ ແລະ ກິລາ ຂອງລັດຖະບານ ກ່ຽວກັບວິທະຍາສາດການສຶກສາ ແລະ ຫຼັກສູດການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ.

### ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ຊຽນດ້ວຍຕົວອັກສອນຫຍໍ້ **"ສວສ"** ເປັນກົງຈັກບໍລິຫານໃນໂຄງປະກອບການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະມົນຕີ ແລະ ຄະນະພັກກະຊວງກ່ຽວກັບ ການຄົ້ນຄວ້າ, ພັດທະນາຫຼັກສູດສື່ການ

ຮຽນ-ການສອນ, ວິທີສິດສອນ, ເຜີຍແຜ່ຂ່າວສານການສຶກສາ, ວັດ ແລະ ປະເມີນຜົນ ສຳລັບການສຶກສາກ່ອນໄວຮຽນ ແລະສາມັນສຶກສາ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ມີໜ້າທີ່ຕົ້ນຕໍດັ່ງນີ້ :

1. ຄົ້ນຄ້ວາ ແລະ ວາງແຜນພັດທະນາຫຼັກສູດການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ;
2. ສ້າງ ແລະ ປັບປຸງນິຕິກຳຕ່າງໆກ່ຽວກັບການນຳໃຊ້ ແລະ ເລີກໃຊ້ຫຼັກສູດ, ສື່ການຮຽນ-ການສອນທຸກຊະນິດ, ການວັດ ແລະ ປະເມີນຜົນ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ;
3. ພັດທະນາຫຼັກສູດ, ປຶ້ມແບບຮຽນ, ປຶ້ມຄູ່ມືຄູ, ອຸປະກອນ, ສື່ເອເລັກໂຕຣນິກ ແລະ ເອກະສານປະກອບການຮຽນ-ການສອນຕ່າງໆ ສຳລັບການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ;
4. ຄົ້ນຄວ້າ, ທົດລອງກ່ຽວກັບຫຼັກສູດ (ຫຼັກສູດແຫ່ງຊາດ ແລະ ຫຼັກສູດທ້ອງຖິ່ນ), ວິທີສອນ, ສື່ການຮຽນ-ການສອນ, ການວັດ ແລະ ປະເມີນຜົນສຳລັບການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ;
5. ປະເມີນຜົນສຳເລັດດ້ານການຮຽນຂອງນັກຮຽນໃນການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ;
6. ຄົ້ນຄວ້າພາສາລາວ, ພາສາເຜົ່າ ແລະ ພາສາຕ່າງປະເທດເພື່ອຮັບໃຊ້ວຽກງານການສຶກສາ ແລະ ກິລາ;
7. ຝຶກອົບຮົມກ່ຽວກັບການນຳໃຊ້ຫຼັກສູດ ແລະສື່ການຮຽນ-ການສອນຕ່າງໆ ທີ່ພັດທະນາຂຶ້ນໃໝ່ໃຫ້ແກ່ຄູຝຶກ;
8. ຝຶກອົບຮົມຍົກລະດັບພາສາຕ່າງປະເທດສຳລັບພະນັກງານ;
9. ຈັດຕັ້ງການສອນໂດຍຜ່ານທາງໂທລະພາບ ແລະ ເຜີຍແຜ່ຂ່າວສານການສຶກສາ ແລະ ກິລາ;
10. ປະຕິບັດວຽກງານອື່ນຕາມການມອບໝາຍຂອງລັດຖະມົນຕີ.

**ມາດຕາ 4. ຂອບເຂດສິດ**

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ມີຂອບເຂດສິດດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານເພື່ອພັດທະນາວຽກທີ່ຕົນຮັບຜິດຊອບຕໍ່ລັດຖະມົນຕີ;
2. ສະເໜີລັດຖະມົນຕີພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກ ບັນດານິຕິກຳ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຫຼັກສູດ, ສືການຮຽນ-ການສອນ ສຳລັບການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ;
3. ສະເໜີລັດຖະມົນຕີພິຈາລະນາ, ອະນຸມັດ, ສ້າງຕັ້ງ ຫຼືຍົກເລີກຫົວໜ່ວຍການຈັດຕັ້ງຕ່າງໆ ທີ່ຂຶ້ນກັບສະຖາບັນຂອງຕົນ;
4. ສະເໜີລັດຖະມົນຕີແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ, ສັບຊ້ອນ, ຈັດວາງຜູ້ບໍລິຫານ, ພະນັກງານວິຊາການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຕາມການແບ່ງຂັ້ນຄຸ້ມຄອງ ແລະຕາມລະບຽບກົດໝາຍ;

5. ຄຸ້ມຄອງ, ນຳໃຊ້ງົບປະມານ, ວັດຖຸ-ຊັບສິນ, ກອງທຶນ, ທຶນຊ່ວຍເຫຼືອປະເພດຕ່າງໆ ຕາມການອະນຸມັດຂອງລັດຖະມົນຕີ;
6. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸມັດຂອງລັດຖະມົນຕີ;
7. ສະເໜີລັດຖະມົນຕີປົກປ້ອງ, ຄຸ້ມຄອງບຸກຄະລາກອນ,ຊັບສິນ, ລິຂະສິດທາງດ້ານການສຶກສາ ແລະ ກິລາ;
8. ປະຕິບັດວຽກງານອື່ນຕາມການມອບໝາຍຂອງລັດຖະມົນຕີ;

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ5. ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ປະກອບມີ 4 ສູນ, 4 ພະແນກ ແລະ 1 ຫ້ອງສະໝຸດ ຄື:

1. ສູນຄົ້ນຄວ້າວິທະຍາສາດສັງຄົມ
2. ສູນຄົ້ນຄວ້າວິທະຍາສາດທຳມະຊາດ
3. ສູນເຕັກໂນໂລຊີການສຶກສາ
4. ສູນສົ່ງເສີມພາສາຕ່າງປະເທດ
5. ພະແນກບໍລິຫານ
6. ພະແນກປະເມີນຜົນ
7. ພະແນກອະນຸບານສຶກສາ
8. ພະແນກຄຸ້ມຄອງວິຊາການ ແລະ ການພິມ
9. ຫ້ອງສະໝຸດ

### ມາດຕາ 6. ໂຄງປະກອບບຸກຄະລາກອນ ແລະຕຳແໜ່ງງານ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາມີຕຳແໜ່ງງານຕ່າງໆສຳລັບບຸກຄະລາກອນຈຳນວນ 127 ຕຳແໜ່ງ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

| | |
|---|---|
| 1. ຜູ້ອຳນວຍການສະຖາບັນ | 1 ຕຳແໜ່ງ |
| 2. ຮອງຜູ້ອຳນວຍການສະຖາບັນ (ທັງເປັນຜູ້ອຳນວຍການສູນ) | 4 ຕຳແໜ່ງ |
| 3. ຫົວໜ້າພະແນກ | 5 ຕຳແໜ່ງ |
| 4. ຮອງຜູ້ອຳນວຍການສູນ (ທຽບເທົ່າຫົວໜ້າພະແນກ) | 8 ຕຳແໜ່ງ |
| 5. ຮອງຫົວໜ້າພະແນກ | 7 ຕຳແໜ່ງ |
| 6. ຫົວໜ້າຂະແໜງ (ທຽບເທົ່າຮອງຫົວໜ້າພະແນກ) | 15 ຕຳແໜ່ງ |

| | |
|---|---|
| 7. ຮອງຫົວໜ້າຂະແໜງ | 15 ຕຳແໜ່ງ |
| 8. ພະນັກງານວິຊາການ: | 72 ຕຳແໜ່ງ ໃນນັ້ນສັງກັດຢູ່: |
| - ສູນຄົ້ນຄວ້າວິທະຍາສາດສັງຄົມ | 14 ຕຳແໜ່ງ |
| - ສູນຄົ້ນຄວ້າວິທະຍາສາດທຳມະຊາດ | 12 ຕຳແໜ່ງ |
| - ສູນເຕັກໂນໂລຊີການສຶກສາ | 14 ຕຳແໜ່ງ |
| - ສູນສົ່ງເສີມພາສາຕ່າງປະເທດ | 8 ຕຳແໜ່ງ |
| - ພະແນກບໍລິຫານ | 8 ຕຳແໜ່ງ |
| - ພະແນກປະເມີນຜົນ | 4 ຕຳແໜ່ງ |
| - ພະແນກອະນຸບານສຶກສາ | 5 ຕຳແໜ່ງ |
| - ພະແນກຄຸ້ມຄອງວິຊາການ ແລະ ການພິມ | 5 ຕຳແໜ່ງ |
| - ຫ້ອງສະໝຸດ | 2 ຕຳແໜງ |

## ໝວດທີ 4
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ຫຼັກການເຮັດວຽກ**

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເຄື່ອນໄຫວວຽກງານຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນ ປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ປະຕິບັດລະບອບຫົວໜ້າດຽວ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານລັດຖະກອນໃນການຄຸ້ມຄອງ ແລະ ພັດທະນາການສຶກສາ ແລະ ກິລາແຫ່ງຊາດ;
2. ເຮັດວຽກຕາມຍຸດທະສາດ, ມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີການກຳນົດເປົ້າໝາຍ, ມີຈຸດສຸມໃນແຕ່ລະໄລຍະຂອງການພັດທະນາ;
3. ຄຸ້ມຄອງ-ບໍລິຫານຂະແໜງການຕາມສາຍຕັ້ງ, ປະສານສົມທົບກັບສາຍຂວາງ, ຕາມລະບົບການຈັດຕັ້ງການຄຸ້ມຄອງລັດລະຫວ່າງສູນກາງ ແລະ ທ້ອງຖິ່ນ;
4. ເຮັດວຽກມີການຕິດຕາມ, ກວດກາ, ປະເມີນຜົນ, ຊຸກຍູ້, ສົ່ງເສີມ, ສະຫຼຸບຕີລາຄາ, ຖອດຖອນບົດຮຽນໃນແຕ່ລະໄລຍະ;
5. ປະຕິບັດລະບອບປະຊຸມ, ລາຍງານສ່ອງແສງເປັນປົກກະຕິ ແລະ ລາຍງານໃຫ້ຂັ້ນເທິງຊາບ.

**ມາດຕາ 8. ການປະສານງານ**

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາມີການພົວພັນ ແລະ ປະສານງານ ກັບບັນດາກົມ, ອົງການເທົ່າກົມ, ສະຖາບັນ, ສູນ, ອົງການຈັດຕັ້ງສາກົນ ແລະອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະເອກະຊົນ ຕາມການເຫັນດີຂອງລັດຖະມົນຕີ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ຕາປະທັບ**

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານ ຂອງກະຊວງສຶກສາທິການ ແລະ ກິລາ, ການຊ່ວຍເຫຼືອ,ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ທັງພາຍໃນແລະຕ່າງປະເທດ ແລະ ມີກາປະທັບ ເພື່ອຮັບໃຊ້ວຽກງານທາງລັດຖະການ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກຳນົດໜ້າທີ່ ແລະກິດຈະກຳລະອຽດຂອງແຕ່ລະ ສູນ, ພະແນກ, ຂະແໜງ ແຕ່ລະຕຳແໜ່ງງານ ລວມທັງກຳນົດມາດຕະຖານແຕ່ລະຕຳແໜ່ງງານ ພ້ອມທັງນຳສະເໜີກະຊວງ ອະນຸມັດນຳໃຊ້ ແລະ ບັນຈຸ, ສັບຊ້ອນພະນັກງານເຂົ້າໃສ່ແຕ່ລະຕຳແໜ່ງງານ ຕາມຄວາມເໝາະສົມ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ຫ້ອງການ, ບັນດາກົມ, ອົງການເທົ່າກົມ, ສະຖາບັນ,ພະແນກສຶກສາທິການ ແລະກິລາແຂວງ, ນະຄອນ, ຫ້ອງການສຶກສາທິການ ແລະ ກິລາເມືອງ,ເທດສະບານ ລວມທັງທົ່ວໜ່ວການສຶກສາ ແລະ ກິລາຕ່າງໆ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ.

**ມາດຕາ 12. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງຂອງລັດຖະມົນຕີສະບັບເລກທີ 2295/ສສ.ຈຕ.08, ລົງວັນທີ 03 ກັນຍາ 2008. ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆ ຊຶ່ງປະກາດໃຊ້ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,**

**ບ່ອນສົ່ງ:**

| | | |
|---|---|---|
| 1. | ກະຊວງພາຍໃນ | 1 ສະບັບ. |
| 2. | ຫ້ອງການກະຊວງ | 1 ສະບັບ. |
| 3. | ບັນດາກົມ ແລະ ສະຖາບັນພາກສ່ວນລະ | 1 ສະບັບ. |
| 4. | ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ-ແຂວງໆລະ | 1 ສະບັບ |
| 5. | ພາກສ່ວນທີ່ກ່ຽວຂ້ອງ | 1 ສະບັບ. |
| 6. | ເກັບມ້ຽນ | 3 ສະບັບ |

ດຣ ພັນຄຳ ວິພາວັນ